ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ 1365

ຫ້ອງການ ເລກທີ_____/ຫອຄ.ກຫຄວ

ນະຄອນຫລວງວຽງຈັນ,ວັນທີ 29 ມິຖຸນາ 2017

**ແຈ້ງການ**

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ;

- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ;

ເລື່ອງ: ການແຕ່ງຕັ້ງຄະນະວິໄຈຂໍ້ມູນວິສາຫະກິດກັບຂໍ້ມູນສ່ວຍສາອາກອນ ແລະຂຶ້ນບັນຊີວິສາຫະກິດທີ່ບໍ່ເຄື່ອນໄຫວ

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເກັບກຳ ແລະ ສຳຫລວດ ຖານລາຍຮັບງົບປະມານຄືນໃໝ່ໃນຂອບເຂດທົ່ວປະເທດ ສະບັບເລກທີ 40/ນຍ, ລົງວັນທີ 29 ກັນຍາ 2016 ແລະ ທິດຊີ້ນຳຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 23/10/2016;

- ອີງຕາມການຕົກລົງເຫັນດີເປັນເອກະພາບກັນ ຂອງຄະນະວິໄຈຂໍ້ມູນວິສາຫະກິດ ແລະ ສ້າງລະບົບເຊື່ອມໂຍງຂໍ້ມູນວິສາຫະກິດ ໃນກອງປະຊຸມຄັ້ງວັນທີ 14/06/2017

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຖືເປັນກຽດແຈ້ງມາຍັງທ່ານ ຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ໃຫ້ປະສານກັບພາກສ່ວນສ່ວຍສາອາກອນ ແຕ່ງຕັ້ງຄະນະວິໄຈຂໍ້ມູນວິສາຫະກິດ ແລະຂໍ້ມູນທະບຽນອາກອນ ໃນຂັ້ນຂອງຕົນຮັບ ຜິດຊອບຢ່າງຈິງຈັງ, ໄຈ້ຂໍ້ມູນໃຫ້ຊັດເຈນ ແລະ ຄົ້ນຄ້ວາກົນໄກການທຽບຂໍ້ມູນໃຫ້ເປັນລະບົບ, ເປັນພື້ນຖານໃຫ້ແກ່ການສ້າງເຄືອຄ່າຍຂໍ້ມູນຮ່ວມກັນໃນຕໍ່ໜ້າ;

2. ໃຫ້ຂຶ້ນບັນຊີຫົວໜ່ວຍວິສາຫະກິດ ທີ່ບໍ່ເຄື່ອນໄຫວ ແລະ ຢຸດເຊົາໂດຍຄວາມສະໝັກໃຈຂອງຜູ້ລົງທຶນເອງ ທີ່ຍັງບໍ່ທັນໄດ້ປະຕິບັດຂັ້ນຕອນການຍຸບເລີກຕາມກົດໝາຍ;

3. ກຳນົດເວລາໃນການຈັດຕັ້ງປະຕິບັດໃຫ້ສຳເລັດກ່ອນວັນທີ 31 ເດືອນສິງຫາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ ຫ້ອງການ

ນ.ບານສະຕີ ເທບພະວົງ